*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, No. 01, 72-79*
*https://doi.org/10.69692/SUJMRD1272*

# Factors Affecting the Desire to Become an Entrepreneur of Students in the Faculty of Business Administration, Savannakhet University

**Bounphan VONGKHASEUM*[1], Thongsa TOUNMANYSONE[1], Khamkeo MANIVONG[1]**

*Faculty of Business Administration, Savannakhet University, Lao PDR*

***Correspondence:** Bounphan Vongkhaseum, Faculty of Business Administration, Savannakhet University,
Tel: +85620 5520 9200,
E-mail: v.bounphan@sku.edu.la

***Article Info:***
***Submitted: September 29, 2025***
***Revised: February 10, 2026***
***Accepted: February 19, 2026***

**Abstract**

The purpose of this study was to investigate the level of entrepreneurial intention among students at the Faculty of Business Administration, Savannakhet University, and to examine the factors influencing their desire to become entrepreneurs. The sample consisted of 414 respondents. Data were collected using a structured questionnaire and analyzed using quantitative methods, including descriptive statistics (mean and standard deviation) and probit regression analysis. The findings revealed a high level of entrepreneurial intention among students, particularly in terms of entrepreneurial attitudes, with a mean score of 3.87 and a standard deviation of 0.61. The factors significantly affecting students' desire to become entrepreneurs were age, year of study, place of residence, and perceived behavioral control. The results of this study provide valuable insights for the development of policies and strategies aimed at more effectively promoting entrepreneurship among students.

**Keywors:** *Students, Faculty of Business Administration, Entrepreneurs*

## 1. ພາກສະເໜີ

ຜູ້ປະກອບການແມ່ນບຸກຄົນທີ່ມີການຈັດຕັ້ງທຸລະກິດໃໝ່ໂດຍ ປະເຊີນກັບຄວາມສ່ຽງ ແລະ ຄວາມບໍ່ແນ່ນອນຂອງທຸລະກິດເພື່ອ ສະແຫວງຜົນກຳໄລ ແລະ ຄວາມຈະເລີນເຕີບໂຕມຸ່ງຫາຄວາມຕ້ອງການ ຂອງຕະຫຼາດເພື່ອສະໜອງຄວາມຕ້ອງການໃນທາງເສດຖະສາດ ນອກຈາກນີ້ຜູ້ປະກອບການແມ່ນຜູ້ລວບລວມປັດໄຈການຜະລິດເຊັ່ນ: ທີ່ດິນ, ແຮງງານ ແລະ ທຶນເພື່ອຜະລິດເປັນສິນຄ້າ ແລະ ການບໍລິການ ເຊິ່ງຜູ້ປະກອບການອາດຈະເປັນໜ່ວຍງານ, ບໍລິສັດ, ຫ້າງຮ້ານ ຫຼື ເອກະສານພຽງຄົນດຽວກໍ່ໄດ້ທັງນີ້ຜູ້ປະກອບການຕ້ອງຍອມຮັບຄວາມ ສ່ຽງທີ່ອາດຈະເກີດຂຶ້ນຈາກການຜະລິດ ແລະ ບໍລິຫານຈັດການໃນ ຂະບວນການຜະລິດ, ຜົນຕອບແທນທີ່ໄດ້ຄືກຳໄລ ແລະ ຂາດທຶນເຊິ່ງຜູ້ ປະກອບການຈະສະແຫວງຫາໂອກາດໃນການດຳເນີນທຸລະກິດ ແລະ ພະຍາຍາມຢ່າງເຕັມທີ່ເພື່ອກ້າວໄປສູ່ຄວາມສຳເລັດຂອງທຸລະກິດ ແລະ ຂອງຕົນເອງ (Chounlamountry & Liemchanly, 2022). ຜູ້ ປະກອບການຖືເປັນຜູ້ທີ່ມີອິດທິພົນ ແລະ ເປັນກົນໄກການຂັບເຄື່ອນ ເສດຖະກິດທີ່ສຳຄັນອັນເນື່ອງມາຈາກການຈະເລີນເຕີບໂຕຂອງ ຜະລິດຕະພັນມວນລວມພາຍໃນປະເທດແມ່ນມາຈາກຜົນປະກອບ ກິດຈະການຂອງພາກທຸລະກິດຂະໜາດນ້ອຍ ແລະ ກາງ, ອີງຕາມຜົນ ການສຳຫຼວດວິສາຫະກິດ ຄັ້ງທີ III ໃນປີ 2020 ໄດ້ສະແດງໃຫ້ເຫັນ ໂຄງປະກອບສ້າງຂອງບັນດາວິສາຫະກິດໃນທົ່ວປະເທດຊຶ່ງຈຳນວນຈຸນ ລະວິສາຫະກິດກວມ ເອົາເຖິງ 94.2%, ວິສາຫະກິດຂະໜາດນ້ອຍ 4.9% ແລະ ວິສາຫະກິດຂະໜາດກາງ 0.7%, ຈຸນລະວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈນກ) ແມ່ນມີບົດບາດຕໍ່ການພັດທະນາ ເສດຖະກິດ-ສັງຄົມໂດຍສະເພາະແມ່ນການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ, ປະກອບສ່ວນເຂົ້າໃນການສ້າງວຽກເຮັດງານທຳ, ສ້າງ ລາຍຮັບ ແລະ ຍົກສູງຊີວິດການເປັນຢູ່ຂອງປະຊາຊົນປະກອບສ່ວນເຂົ້າ ໃນການລຶບລ້າງຄວາມທຸກຍາກຂອງປະຊາຊົນກໍ່ຄືການສ້າງປະຖົມປັດ ໄຈໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວເຮັດ ໃຫ້ເສດຖະກິດຂອງຊາດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ (Savanphatthana, 2025).

ມະຫາວິທະຍາໄລສະຫວັນນະເຂດ ເປັນມະຫາວິທະຍາໄລແຫ່ງ ທີ 4 ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ຂອງ ສປປ ລາວ ໄດ້ ຮັບການສ້າງຕັ້ງຂຶ້ນຕາມດຳລັດນາຍົກລັດຖະມົນຕີລັດຖະມົນຕີແຫ່ງ ສປປ ລາວ ເລກທີ 091/ນຍ, ລົງວັນທີ 27 ມີນາ 2009 ແລະ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງມະຫາວິທະຍາໄລສະຫວັນ ນະເຂດ ສະບັບເລກທີ 280/ນຍ ລົງວັນທີ 22 ພຶດສະພາ 2024 ເປັນ ສູນກາງຂອງການສຶກສາ ແລະ ວັດທະນາທຳໃນເຂດພາກກາງແນໃສ່ ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ, ການຄົ້ນຄວ້າເພື່ອ ຕອບສະໜອງແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ (Suikhamlar et al., 2022). ຄະນະບໍລິຫານທຸລະກິດ ກໍ່ເປັນຄະນະ ວິຊາໜຶ່ງທີ່ນອນຢູ່ໃນອົງກອບຂອງ ມະຫາວິທະຍາໄລສະຫວັນນະເຂດ ຊຶ່ງໄດ້ສ້າງບຸກຄະລາກອນອອກມາຮັບໃຊ້ສັງຄົມໃນລະດັບປະລິນຍາຕີ ຈຳນວນ 13 ຮຸ່ນຄົນ (ນັບແຕ່ປີ 2013 ເປັນຕົ້ນມາ) ນອກຈາກນີ້ຍັງມີ ຫຼັກສູດຈຳນວນໜຶ່ງທີ່ກຳລັງທີ່ຈະນຳສະເໜີເພື່ອເປີດການຮຽນ-ການ ສອນ ເຊິ່ງຈະເປັນການປະກອບສ່ວນສ້າງນັກວິຊາການທີ່ມີຄວາມຮູ້ ຄວາມສາມາດດ້ານເສດຖະສາດ ແລະ ບໍລິຫານທຸລະກິດໂດຍປະຕິບັດ ຕາມ 3 ລັກສະນະ ແລະ 5 ຫຼັກມູນການສຶກສາທີ່ກະຊວງສຶກສາທິການ ແລະ ກິລາວາງອອກ ພາຍຫຼັງຈົບຈາກຫຼັກສູດນີ້ໄປນັກສຶກສາສາມາດ ເຮັດວຽກກັບພາກລັດ, ເອກະຊົນ, ອົງການຈັດຕັ້ງສາກົນ ແລະ ຂະແໜງການທີ່ກ່ຽວຂ້ອງໄດ້ຕາມຄວາມຕ້ອງການຂອງຕະຫຼາດແຮງງານ ແລະ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/*

ສັງຄົມໃນ 3 ແຂວງພາກກາງ ສປປ ລາວ ແລະ ສາມາດໃຫ້ບໍລິການວິຊາການໃນຂົງເຂດການບໍລິການກ່ຽວກັບການດຳເນີນການໃຫ້ຄຳປຶກສາທາງດ້ານ ເສດຖະກິດ-ການຄ້າ-ທຸລະກິດ ໃຫ້ແກ່ພາກລັດ ແລະ ເອກະຊົນຢ່າງມີຈັນຍາບັນ ແລະ ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານ ໃຫ້ແກ່ຊຸມຊົນ ໂດຍການເຮັດວຽກຮ່ວມກັນເປັນທີມລະຫວ່າງທີມງານໃນອົງກອນ ແລະ ປະຊາຊົນທ້ອງຖິ່ນ

ໃນຊ່ວງຫຼາຍປີທີ່ຜ່ານມາຜູ້ປະກອບການໄດ້ກາຍເປັນຜູ້ຂັບເຄື່ອນຫຼັກຂອງການຂະຫຍາຍຕົວທາງດ້ານທຸລະກິດໃນທົ່ວໂລກ ແລະ ນັບແຕ່ນັ້ນມາການສຶກສາດ້ານຜູ້ປະກອບການກໍ່ໄດ້ຮັບຄວາມສົນໃຈເພີ່ມຂຶ້ນເລື້ອຍໆ, ການເປັນຜູ້ປະກອບການຖືເປັນການປະສົມປະສານລະຫວ່າງສິລະປະ ແລະ ວິທະຍາສາດເຊິ່ງໃຊ້ການສ້າງມູນຄ່າເມື່ອກຳນົດເປົ້າໝາຍຂອງລູກຄ້າ ຢ່າງໃດກໍ່ຕາມເບິ່ງຄືວ່າຈະມີຄວາມເຊື່ອແບບຜິດໆກ່ຽວກັບສູດຄວາມສຳເລັດທີ່ຈຳເປັນຕໍ່ຄວາມສຳເລັດ (Wathanakom et al., 2020). ຄະນະບໍລິຫານທຸລະກິດ ເປັນສະຖາບັນຂອງການສຶກສາຊັ້ນສູງທີ່ມີຈຸດປະສົງຜະລິດບຸກຄະລາກອນເພື່ອຕອບສະໜອງຕາມຄວາມຕ້ອງການຂອງໜ່ວຍງານ ແລະ ອຸດສາຫະກຳທີ່ມີຢູ່ເປັນຈຳນວນຫຼາຍຈຶ່ງສົ່ງຜົນໃຫ້ມີຄວາມຈຳເປັນຕ້ອງຈັດຮູບແບບການຮຽນ-ການສອນ ແລະ ຫຼັກສູດທີ່ສາມາດພັດທະນາທັກສະ ແລະ ສັກກະຍະພາບຂອງນັກສຶກສາໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານໃນສັງຄົມ.

ຈາກເຫດຜົນຂ້າງເທິງນີ້ຈຶ່ງກຳນົດຈຸດປະສົງເພື່ອສຶກສາ: 1) ລະດັບຄວາມຕ້ອງການໃນການເປັນຜູ້ປະກອບການຂອງນັກສຶກສາຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ ແລະ 2) ປັດໄຈທີ່ມີຜົນຕໍ່ຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ ເພື່ອນຳຜົນຈາກການວິໄຈໃນຄັ້ງນີ້ນຳໃຊ້ເຂົ້າໃນການຮຽນ-ການສອນວິຊາການເປັນຜູ້ປະກອບການໃນການສ້າງທຸລະກິດໃໝ່ ແລະ ເປັນຂໍ້ມູນປະກອບການພິຈາລະນາໃນການສ້າງຫຼັກສູດໃໝ່ໃນອານາຄົດເພື່ອຜະລິດບຸກຄະລາກອນໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ.

## 2. ອຸປະກອນ ແລະ ວິທີການ

2.1 ຮູບແບບການສຶກສາ

ການສຶກສາຄັ້ງນີ້ແມ່ນແບບປະລິມານໂດຍແມ່ນນຳໃຊ້ແບບຈຳລອງທາງເສດຖະມິຕິເຂົ້າຊ່ວຍເພື່ອຊອກຫາປັດໄຈທີ່ມີຜົນຕໍ່ຄວາມຕ້ອງການເປັນຜູ້ປະກອບການເປັນຜູ້ປະກອບການຂອງນັກສຶກສາ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ

Want = *f*(Gen, Age, Ethnics, Major, Years, Resid, Fa, Mo, EA, SN, PBC)

2.2 ປະຊາກອນ ແລະ ກຸ່ມຕົວຢ່າງ

ກຸ່ມປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ແມ່ນຈຳນວນນັກສຶກສາ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດໂດຍແມ່ນໄດ້ເລືອກເອົາຈຳນວນນັກສຶກສາທັງໝົດແຕ່ປີ 1 ຫາ ປີ 4 ອີງໃສ່ຂໍ້ມູນທີ່ໄດ້ມາຈາກສະຖິຕິນັກສຶກສາ ປະຈຳສົກສຶກສາ 2024 - 2025 ຈຳນວນ 414 ຄົນ

2.3 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ

ການສຶກສາໃນຄັ້ງນີ້ແມ່ນໄດ້ນຳແບບສອບຖາມເພື່ອເປັນເຄື່ອງມືເຂົ້າໃນການເກັບກຳຂໍ້ມູນ ແຕ່ກ່ອນຈະມີການເກັບກຳຢ່າງເປັນທາງການນັ້ນ ກໍ່ໄດ້ນຳແບບສອບຖາມໄປຜ່ານຜູ້ຊ່ຽວຊານຈຳນວນ 5 ທ່ານເພື່ອກວດຄວາມສອດຄ່ອງຂອງແຕ່ລະຄຳຖາມກັບຈຸດປະສົງຂອງບົດຄົ້ນຄວ້າໂດຍເຫັນວ່າຄ່າ IOC = 0.60-1.00 ແລະ ຄ່າຄວາມເຊື່ອໝັ້ນ (Reliability) ດ້ວຍຄ່າສຳປະສິດຂອງ Cronbach's Alpha ໄດ້ຄ່າຄວາມເຊື່ອໝັ້ນເທົ່າກັບ 95% ເຊິ່ງແບບສອບຖາມປະກອບມີ 3 ພາກສ່ວນຄື: 1) ຂໍ້ມູນທົ່ວໄປ, 2) ລະດັບຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາ ແລະ 3) ຄວາມຄິດເຫັນເພີ່ມເຕີມ

2.4 ການເກັບກຳຂໍ້ມູນ

ການສຶກສາຄັ້ງນີ້ແມ່ນໄດ້ນຳໃຊ້ຂໍ້ມູນປະຖົມພູມເຊິ່ງໄດ້ມາຈາກການນຳໃຊ້ແບບສອບຖາມແຈກຢາຍໃຫ້ກັບນັກສຶກສາ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ ເພື່ອປະເມີນຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາ ໂດຍມີນັກສຶກສາສາຂາບໍລິຫານການຄ້າ, ບໍລິຫານທຸລະກິດທົ່ວໄປ, ບໍລິຫານການທ່ອງທ່ຽວ, ບໍລິຫານການໂຮງແຮມ, ການເງິນ, ການທະນາຄານ ແລະ ການບັນຊີ ຊຶ່ງໄລຍະເວລາໃນການເກັບແມ່ນເລີ່ມຈາກ 01 ມັງກອນ 2025 – 30 ເມສາ 2025

2.5 ການວິເຄາະຂໍ້ມູນ

ສຳລັບການວິເຄາະຂໍ້ມູນປັດໄຈທີ່ມີຜົນຕໍ່ຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ ແມ່ນຈະນຳໃຊ້ສົມຜົນແບບຖົດຖອຍ Probit Regression ໂດຍນຳໃຊ້ໂປຣແກຣມສຳເລັດຮູບທາງສະຖິຕິເຂົ້າໃນການວິເຄາະເພື່ອຊອກຫາຄ່າສຳປະສິດທີ່ສະແດງຄວາມສຳພັນລະຫວ່າງຕົວປ່ຽນຕາມ ແລະ ຕົວປ່ຽນອິດສະຫຼະທີ່ກ່ຽວຂ້ອງ

$$Want_i = \beta_0 + \beta_1 Gen + \beta_2 Age + \beta_3 Ethnics + \beta_4 Major + \beta_5 Years + \beta_6 Resid + \beta_7 Fa \; \beta_8 Mo + \beta_9 EA + \beta_{10} SN + \beta_{11} PBC + \varepsilon_i$$

Want = ການເລືອກເປັນຜູ້ປະກອບການ (ຕົວປ່ຽນຕາມ)

$\beta_0$ : ຄ່າຄົງຄ່າ, $\beta_1 - \beta_{11}$ : ສຳປະສິດຂອງຕົວປ່ຽນອິດສະຫຼະ

$X_{ij}$ : ຕົວປ່ຽນອິດສະຫຼະ

$\varepsilon_t$ : ຄ່າຄາດເຄື່ອນ

ເຊິ່ງຕົວປ່ຽນຕາມ ແລະ ຕົວປ່ຽນອິດສະຫຼະທີ່ນຳໃຊ້ເຂົ້າໃນແບບຈຳລອງນີ້ແມ່ນສະແດງອອກດັ່ງລາຍລະອຽດດັ່ງຕາຕະລາງທີ 1.

## 3. ຜົນໄດ້ຮັບ

3.1 ຜົນການວິເຄາະລະດັບຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາພາຍໃນ ຄະນະບໍລິຫານທຸລະກິດ

ຜົນການສຶກສາພົບວ່າ ດ້ານທັດສະນະຄະຕິໃນການເປັນຜູ້ປະກອບການ ເຫັນວ່າຢູ່ໃນລະດັບຫຼາຍ ມີ $\bar{X}$=3.87, SD= 0.61 ເນື່ອງຈາກວ່ານັກສຶກສາສ່ວນໃຫຍ່ໃນປະຈຸບັນໄດ້ຮຽນຮູ້ ແລະ ເຂົ້າໃຈວ່າພວກເຂົາເອງແມ່ນເປັນແຮງງານທີ່ສຳຄັນຂອງປະເທດຊາດໃນອະນາຄົດທີ່ຈະກາຍເປັນຜູ້ປະກອບການພ້ອມທັງປະກອບສ່ວນໃນການສ້າງສາພັດທະນາເສດຖະກິດ-ສັງຄົມໃຫ້ມີຄວາມຈະເລີນຮຸ່ງເຮືອງ, ຮອງລົງມາແມ່ນດ້ານຄວາມຮູ້ຄວາມສາມາດໃນການຄວບຄຸມພຶດຕິກຳ ເຫັນວ່າ

ຢູ່ໃນລະດັບຫຼາຍ ມີ $\bar{X}$=3.72, SD= 0.67 ເນື່ອງຈາກວ່າການທີ່ນັກສຶກສາມີຄວາມເຊື່ອໝັ້ນໃນໂຕຂອງນັກສຶກສາເອງຈະເຮັດໃຫ້ຄວາມຕ້ອງການເປັນຜູ້ປະກອບການຂອງພວກເຂົາປະກົດຜົນເປັນຈິງໃນອະນາຄົດພ້ອມທັງສ້າງມີຄວາມເຂັ້ມແຂງ ແລະ ສ້າງເປົ້າໝາຍການເປັນເຈົ້າຂອງກິດຈະການຂອງເຂົາເຈົ້າໃນອະນາຄົດໄດ້ຊັດເຈນຂຶ້ນ ແລະ ດ້ານບັນທັດຖານທາງດ້ານສັງຄົມ ເຫັນວ່າຢູ່ໃນລະດັບຫຼາຍ ມີ $\bar{X}$=3.47, SD= 0.80 ເນື່ອງຈາກການໄດ້ຮັບການສະໜັບສະໜູນຈາກຄອບຄົວ, ພີ່ນ້ອງ ຫຼື ໝູ່ເພື່ອນ ພ້ອມທັງການໄດ້ຮັບການຊ່ວຍເຫຼືອຈາກພາກລັດໃນການເລີ່ມຕົ້ນເປັນຜູ້ປະກອບການເຊິ່ງຈະເຮັດໃຫ້ມີກຳລັງໃຈພ້ອມທີ່ຈະລົງມືເລີ່ມຕົ້ນສ້າງທຸລະກິດ (ຕາຕະລາງທີ 2).

3.2 ຜົນການວິເຄາະປັດໃຈທີ່ມີຜົນຕໍ່ຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາ ຄະນະບໍລິຫານທຸລະກິດ

ສຳລັບການຄາດປະມານໃນແບບຈຳລອງ (Model) ທີ່ໄດ້ນຳໃຊ້ຂໍ້ມູນໄຂວ່ (Cross Section Data) ການກວດສອບຄວາມສຳພັນຂອງບັນດາຕົວປ່ຽນອິດສະຫຼະດວ້ຍກັນ ຫຼື ການກວດສອບບັນຫາພະຫຸສຳພັນຂອງບັນດາຕົວປ່ຽນອິດສະຫຼະ (Multicollinearity) ຖ້າຫາກວ່າຕົວປ່ຽນອິດສະຫຼະຫາກມີການພົວພັນກັນສູງກວ່າ 0.80 (ສຳລັບຂໍ້ມູນໄຂວ່) ສະແດງວ່າເກີດມີບັນຫາພະຫຸສຳພັນເຊິ່ງຈາກການທົດສອບໃນແບບຈຳລອງນີ້ດວ້ຍວິທີ Correlation Matrix ເຫັນວ່າຄ່າສູງສຸດແມ່ນ 0.70 ເຊິ່ງເປັນການພົວພັນຂອງຕົວປ່ຽນ ດ້ານທັດສະນະຄະຕິໃນການເປັນຜູ້ປະກອບການກັບ ດ້ານຄວາມຮູ້ຄວາມສາມາດໃນການຄວບຄຸມພຶດຕິກຳ ແຕ່ວ່າຕ່ຳກວ່າ 0.8 ສະແດງວ່າບໍ່ມີບັນຫາດັ່ງກ່າວໃນແບບຈຳລອງນີ້.

ຄ່າ Pseudo $R^2$ = 0.0693 ໝາຍຄວາມວ່າຕົວປ່ຽນອິດສະຫຼະທັງໝົດໃນແບບຈຳລອງນີ້ສາມາດອະທິບາຍຕົວປ່ຽນຕາມໄດ້ 6.93%

ຈາກການຄາດປະມານແບບຈຳລອງ ຊຶ່ງຜົນຂອງການສຶກສາເຫັນວ່າມີ 4 ປັດໃຈຄື: ອາຍຸ, ປີຮຽນ, ທີ່ຢູ່ອາໄສ ແລະ ການຄວບຄຸມພຶດຕິກຳ. ສ່ວນປັດໃຈອື່ນ (ດ້ານເພດ, ຊົນເຜົ່າ, ສາຂາຮຽນ, ອາຊີບພໍ່, ອາຊີບແມ່, ທັດສະນະຄະຕິໃນການເປັນຜູ້ປະກອບການ ແລະ ບັນທັດຖານທາງສັງຄົມ) ບໍ່ຜ່ານການທົດສອບທາງສະຖິຕິເຊິ່ງບໍ່ມີຜົນຕໍ່ຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ ເພື່ອໃຫ້ເຂົ້າໃຈງ່າຍໃນການອະທິບາຍການພົວພັນດັ່ງກ່າວພວກຂ້າພະເຈົ້າຈະໄດ້ນຳສະເໜີຜົນກະທົບໜ່ວຍສຸດທ້າຍ (Marginal Effect) ເຊິ່ງລາຍລະອຽດສະແດງອອກດັ່ງຕາຕະລາງທີ 3.

ຖ້ານັກສຶກສາ ແມ່ນເພດຍິງ ຈະເຮັດໃຫ້ໂອກາດມີຄວາມຕ້ອງການເປັນຜູ້ປະກອບການຫຼາຍກວ່າ 9%ທຽບໃສ່ນັກສຶກສາເພດຊາຍ ແຕ່ບໍ່ມີລະດັບຄວາມສຳຄັນທາງສະຖິຕິ

ຖ້ານັກສຶກສາ ມີອາຍຸເພີ່ມຂຶ້ນ 1 ປີ ຈະເຮັດໃຫ້ໂອກາດມີຄວາມຕ້ອງການເປັນຜູ້ປະກອບການຫຼາຍກວ່າ6% ທຽບໃສ່ນັກສຶກສາທີ່ມີອາຍຸອື່ນໆ ດວ້ຍລະດັບຄວາມສຳຄັນທາງສະຖິຕິ 1%

ຖ້ານັກສຶກສາ ເປັນຄົນຊົນເຜົ່າລາວ ຈະເຮັດໃຫ້ໂອກາດມີຄວາມຕ້ອງການເປັນຜູ້ປະກອບການໜ້ອຍກວ່າ 12 % ທຽບໃສ່ກັບນັກສຶກສາທີ່ມີຊົນເຜົ່າອື່ນໆ ແຕ່ບໍ່ມີລະດັບຄວາມສຳຄັນທາງສະຖິຕິ

ຖ້ານັກສຶກສາ ຮຽນສາຂາບໍລິຫານທຸລະກິດທົ່ວໄປ ຈະເຮັດໃຫ້ໂອກາດມີຄວາມຕ້ອງການເປັນຜູ້ປະກອບການໜ້ອຍກວ່າ 2% ທຽບໃສ່ກັບນັກສຶກສາທີ່ຮຽນສາຂາອື່ນ ແຕ່ບໍ່ມີລະດັບຄວາມສຳຄັນທາງສະຖິຕິ

ຖ້ານັກສຶກສາ ຮຽນຢູ່ປີທີ 4 ຈະເຮັດໃຫ້ໂອກາດມີຄວາມຕ້ອງການເປັນຜູ້ປະກອບການໜ້ອຍກວ່າ 21% ທຽບໃສ່ນັກສຶກສາທີ່ຮຽນຢູ່ປີ 1-3 ດວ້ຍລະດັບຄວາມສຳຄັນທາງສະຖິຕິ 1%

ຖ້ານັກສຶກສາ ມີທີ່ຢູ່ອາໄສພາຍໃນ ນະຄອນໄກສອນພົມວິຫານ ຈະເຮັດໃຫ້ໂອກາດມີຄວາມຕ້ອງການເປັນຜູ້ປະກອບການໜ້ອຍກວ່າ 9% ທຽບໃສ່ນັກສຶກສາທີ່ມີທີ່ຢູ່ອາໄສບ່ອນອື່ນ ດວ້ຍລະດັບຄວາມສຳຄັນທາງສະຖິຕິ 10%

ຖ້າພໍ່ຂອງນັກສຶກສາ ມີອາຊີບຄ້າຂາຍ ຈະເຮັດໃຫ້ໂອກາດມີຄວາມຕ້ອງການເປັນຜູ້ປະກອບການຫຼາຍກວ່າ 9% ທຽບໃສ່ກັບອາຊີບອື່ນ ແຕ່ບໍ່ມີລະດັບຄວາມສຳຄັນທາງສະຖິຕິ

ຖ້າແມ່ຂອງນັກສຶກສາ ມີອາຊີບຄ້າຂາຍ ຈະເຮັດໃຫ້ໂອກາດມີຄວາມຕ້ອງການເປັນຜູ້ປະກອບການຫຼາຍກວ່າ 10% ທຽບໃສ່ກັບອາຊີບອື່ນ ແຕ່ບໍ່ມີລະດັບຄວາມສຳຄັນທາງສະຖິຕິ

ຖ້າຄ່າສະເລ່ຍດ້ານທັດສະນະຄະຕິໃນການເປັນຜູ້ປະກອບການຂອງນັກສຶກສາ ເພີ່ມຂຶ້ນ ຈະເຮັດໃຫ້ໂອກາດມີຄວາມຕ້ອງການເປັນຜູ້ປະກອບການຫຼາຍກວ່າ 6% ທຽບໃສ່ກັບດ້ານອື່ນໆ ແຕ່ບໍ່ມີລະດັບຄວາມສຳຄັນທາງສະຖິຕິ

ຖ້າວ່າຄ່າສະເລ່ຍດ້ານບັນທັດຖານທາງສັງຄົມຂອງນັກສຶກສາເພີ່ມຂຶ້ນ ຈະເຮັດໃຫ້ໂອກາດມີຄວາມຕ້ອງການເປັນຜູ້ປະກອບການໜ້ອຍກວ່າ 4% ທຽບໃສ່ກັບດ້ານອື່ນໆ ແຕ່ບໍ່ມີລະດັບຄວາມສຳຄັນທາງສະຖິຕິ

ຖ້າວ່າຄ່າສະເລ່ຍດ້ານການຄວບຄຸມພຶດຕິກຳຂອງນັກສຶກສາເພີ່ມຂຶ້ນ ຈະເຮັດໃຫ້ໂອກາດມີຄວາມຕ້ອງການເປັນຜູ້ປະກອບການຫຼາຍກວ່າ 9% ດວ້ຍລະດັບຄວາມສຳຄັນທາງສະຖິຕິ 10%

**4. ວິພາກຜົນ**

4.1 ລະດັບຄວາມຕ້ອງການໃນການເປັນຜູ້ປະກອບການຂອງນັກສຶກສາ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລ ສະຫວັນນະເຂດ

ຜົນການສຶກສາພົບວ່າ ດ້ານທັດສະນະຄະຕິໃນການເປັນຜູ້ປະກອບການ ເຫັນວ່າຢູ່ໃນລະດັບຫຼາຍ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງທ່ານ (Rungsuk, 2016; Shah & Soomro, 2017; Bounthongmi, 2019; Barrios et al., 2021; Souliyavong, & Silichamphone, 2021; Tanyong et al., 2021; Korsukthaweekhoon, 2022; Pimpasone, 2022; Khamyun, 2023). ສ່ວນວ່າຜົນການຄົ້ນຄວ້າຂອງທ່ານ (Gonzalez-serrano et al., 2018; Sornsermsombut, 2018) ເຫັນວ່າຢູ່ໃນລະດັບຫຼາຍທີ່ສຸດ

ດ້ານຄວາມຮູ້ຄວາມສາມາດໃນການຄວບຄຸມພຶດຕິກຳ ເຫັນວ່າຢູ່ໃນລະດັບຫຼາຍ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງRungsuk (2016); Souliyavong, & Silichamphone (2021); Korsukthaweekhoon (2022); Khamyun (2023). ແຕ່ວ່າຜົນການຄົ້ນຄວ້າຂອງ Shah & Soomro (2017); Gonzalez-serrano

et al. (2018); Bounthongmi (2019); Barrios et al. (2021) ເຫັນວ່າຢູ່ໃນລະດັບປານກາງ

ດ້ານບັນທັດຖານທາງດ້ານສັງຄົມ ເຫັນວ່າຢູ່ໃນລະດັບຫຼາຍ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Rungsuk, (2016); Korsukthaweekhoon (2022); Khamyun (2023).

4.2 ປັດໃຈທີ່ມີຜົນຕໍ່ຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລ ສະຫວັນນະເຂດ

ຜົນການສຶກສາທີ່ໄດ້ຈາກການຄາດປະມານແບບຈໍາລອງ (Probit) ຊຶ່ງຜົນຂອງການສຶກສາເຫັນວ່າແມ່ນຈະໄດ້ວິພາກດັ່ງລຸ່ມນີ້:

ຜົນການສຶກສາດ້ານເພດແມ່ນພົວພັນໃນທິດທາງດຽວກັນກັບຄວາມຕ້ອງການເປັນຜູ້ປະກອບການ ແຕ່ບໍ່ມີລະດັບຄວາມສໍາຄັນທາງສະຖິຕິ ເຊິ່ງບໍ່ສອດຄ່ອງກັບຜົນການຄົ້ນຄວ້າຂອງ Shah & Soomro (2017) ທີ່ພົບວ່າມີການພົວພັນໃນທິດທາງດຽວກັນ ໝາຍຄວາມວ່າ ຖ້ານັກສຶກສາເປັນເພດຍິງຈະມີໂອກາດມີຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາຫຼາຍກວ່າ ດ້ວຍລະດັບຄວາມສໍາຄັນທາງສະຖິຕິ 0.01

ຜົນການສຶກສາດ້ານອາຍຸແມ່ນພົວພັນໃນທິດທາງດຽວກັນກັບຄວາມຕ້ອງການເປັນຜູ້ປະກອບການ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Ahmed et al. (2010); Shah & Soomro (2017) ໝາຍຄວາມວ່າຖ້າອາຍຸຂອງນັກສຶກສາເພີ່ມຂຶ້ນ 1 ປີ ຈະມີໂອກາດມີຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາຫຼາຍກວ່າ ດ້ວຍລະດັບຄວາມສໍາຄັນທາງສະຖິຕິ 0.01, ແຕ່ບໍ່ສອດຄ່ອງກັບການສຶກສາຂອງ Ohanu & Ogbuanya (2018) ທີ່ມີການພົວພັນໃນທິດທາງກົງກັນຂ້າມກັບຄວາມຕ້ອງການເປັນຜູ້ປະກອບການ ແລະ ບໍ່ສອດຄ່ອງກັບການສຶກສາຂອງ Souliyavong & Silichamphone (2021); Gonzalez-serrano et al. (2018) ທີ່ບໍ່ມີລະດັບຄວາມສໍາຄັນທາງສະຖິຕິ.

ຜົນການສຶກສາດ້ານປີຮຽນແມ່ນມີການພົວພັນໃນທິດທາງກົງກັນຂ້າມກັບຄວາມຕ້ອງການເປັນຜູ້ປະກອບການ ດ້ວຍລະດັບຄວາມສໍາຄັນທາງສະຖິຕິ 0.01 ເຊິ່ງບໍ່ສອດຄ່ອງກັບຜົນການຄົ້ນຄວ້າຂອງ Ahmed et al. (2010) ທີ່ພົບວ່າມີການພົວພັນໃນທິດທາງດຽວກັນກັບຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາ ດ້ວຍລະດັບຄວາມສໍາຄັນທາງສະຖິຕິ 0.01

ຜົນການສຶກສາດ້ານອາຊີບຂອງພໍ່ແມ່ນມີການພົວພັນໃນທິດທາງດຽວກັນກັບຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາ ແຕ່ວ່າບໍ່ມີລະດັບຄວາມສໍາຄັນທາງສະຖິຕິ ເຫັນວ່າບໍ່ສອດຄ່ອງກັບຜົນການຄົ້ນຄວ້າຂອງ (Ohanu & Ogbuanya, 2018) ທີ່ມີການພົວພັນໃນທິດທາງກົງກັນຂ້າມກັບຄວາມຕ້ອງການເປັນຜູ້ປະກອບການ ດ້ວຍລະດັບຄວາມສໍາຄັນທາງສະຖິຕິ 0.01

ຜົນການສຶກສາດ້ານອາຊີບຂອງແມ່ແມ່ນມີການພົວພັນໃນທິດທາງດຽວກັນກັບຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາ ແຕ່ວ່າບໍ່ມີລະດັບຄວາມສໍາຄັນທາງສະຖິຕິ ເຫັນວ່າບໍ່ສອດຄ່ອງກັບຜົນການຄົ້ນຄວ້າຂອງ Ohanu & Ogbuanya (2018) ທີ່ມີການພົວພັນໃນທິດທາງກົງກັນຂ້າມກັບຄວາມຕ້ອງການເປັນຜູ້ປະກອບການ ດ້ວຍລະດັບຄວາມສໍາຄັນທາງສະຖິຕິ 0.01

ຜົນການສຶກສາດ້ານທັດສະນະຄະຕິໃນການເປັນຜູ້ປະກອບການແມ່ນມີການພົວພັນໃນທິດທາງດຽວກັນກັບຄວາມຕ້ອງການ ເປັນຜູ້ປະກອບການຂອງນັກສຶກສາ ແຕ່ວ່າບໍ່ມີລະດັບຄວາມສໍາຄັນທາງສະຖິຕິ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Khamyun (2023); Korsukthaweekhoon, (2022); Sornsermsombut, (2018); Bounthongmi, (2019); Souliyavong & Silichamphone (2021); Pommi & Naksai (2020); Poolsawat & Potipiroon (2019); Pimpasone (2022); Tanyong et al. (2021); Wathanakom et al. (2020); Fragoso et al. (2019); Ohanu & Ogbuanya (2018); Jalil et al. (2021); Barrios et al. (2021); Gonzalez-serrano et al. (2018); Shah & Soomro (2017); Prajapati (2019); Vuong et al. (2020); Ounthaphanh et al. (2023) ດ້ວຍລະດັບຄວາມສໍາຄັນທາງສະຖິຕິ

ຜົນການສຶກສາດ້ານບັນທັດຖານທາງສັງຄົມແມ່ນມີການພົວພັນໃນທິດທາງກົງກັນຂ້າມກັບຄວາມຕ້ອງການເປັນຜູ້ປະກອບການ ແຕ່ບໍ່ມີລະດັບຄວາມສໍາຄັນທາງສະຖິຕິ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Khamyun (2023); Bounthongmi (2019); Pimpasone (2022); Gonzalez-serrano et al. (2018); Prajapati (2019); Ounthaphanh et al. (2023). ແຕ່ວ່າກົງກັນຂ້າມກັບຜົນການຄົ້ນຄວ້າຂອງ Korsukthaweekhoon (2022; Souliyavong & Silichamphone (2021); Pommi & Naksai (2020); Poolsawat & Potipiroon (2019); Ohanu & Ogbuanya (2018); Jalil et al. (2021); Barrios et al. (2021); Shah & Soomro (2017) ທີ່ພົບວ່າມີການພົວພັນໃນທິດທາງດຽວກັນກັບຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາ ດ້ວຍລະດັບຄວາມສໍາຄັນທາງສະຖິຕິ 0.01

ຜົນການສຶກສາດ້ານຄວາມສາມາດໃນການຄວບຄຸມພຶດຕິກໍາແມ່ນພົບວ່າມີການພົວພັນໃນທິດທາງດຽວກັນກັບຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາ ດ້ວຍລະດັບຄວາມສໍາຄັນທາງສະຖິຕິ 0.01 ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ hamyun (2023); Korsukthaweekhoon (2022); Bounthongmi (2019); Pommi & Naksai ( 2020); Poolsawat & Potipiroon (2019); ÖzeltÜrkay et al. (2019); Barrios et al. (2021); Gonzalez-serrano et al. (2018); Prajapati (2019). ແຕ່ວ່າບໍ່ສອດຄ່ອງກັບຜົນການຄົ້ນຄວ້າຂອງ (Souliyavong & Silichamphone (2021); Jalil et al. (2021); Shah & Soomro (2017) ທີ່ພົບວ່າມີການພົວພັນໃນທິດທາງດຽວກັນກັບຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາ ແຕ່ບໍ່ມີລະດັບຄວາມສໍາຄັນທາງສະຖິຕິ

**5. ສະຫຼຸບຜົນ**

ຜົນການສຶກສາພົບວ່າ ດ້ານທັດສະນະຄະຕິໃນການເປັນຜູ້ປະກອບການ ເຫັນວ່າຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3.87, SD= 0.61, ຮອງລົງມາແມ່ນດ້ານຄວາມຮູ້ຄວາມສາມາດໃນການຄວບຄຸມພຶດຕິກໍາ ເຫັນວ່າຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3.72, SD= 0.67 ແລະ ດ້ານບັນທັດຖານທາງດ້ານສັງຄົມ ເຫັນວ່າຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3.47, SD= 0.80

ຈາກການຄາດປະມານແບບຈຳລອງ ຊຶ່ງຜົນຂອງການສຶກສາເຫັນວ່າມີ 4 ປັດໄຈຄື: ອາຍຸ, ປີຮຽນ, ທີ່ຢູ່ອາໄສ ແລະ ການຄວບຄຸມພຶດຕິກຳ. ສ່ວນປັດໄຈອື່ນ (ດ້ານເພດ, ຊົນເຜົ່າ, ສາຂາຮຽນ, ອາຊີບພໍ່, ອາຊີບແມ່, ທັດສະນະຄະຕິໃນການເປັນຜູ້ປະກອບການ ແລະ ບັນທັດຖານທາງສັງຄົມ) ບໍ່ຜ່ານການທົດສອບທາງສະຖິຕິ ເຊິ່ງບໍ່ມີຜົນຕໍ່ຄວາມຕ້ອງການເປັນຜູ້ປະກອບການຂອງນັກສຶກສາ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ

ຈາກຜົນການສຶກສາຂໍສະເໜີມາຍັງຜູ້ທີ່ຈະສຶກສາໃນອະນາຄົດຄວນຂະຫຍາຍການສຶກສາໄປຍັງນັກສຶກສາມະຫາວິທະຍາໄລອື່ນເພື່ອໃຫ້ໄດ້ຂໍ້ມູນທີ່ຄົບຖ້ວນຂຶ້ນຕື່ມ ພ້ອມທັງເພີ່ມຕົວປ່ຽນດ້ານການສຶກສາເຊັ່ນດ້ານເສດຖະກິດ ແລະ ການດຳລົງຊີວິດ ນອກຈາກນີ້ຂໍສະເໜີມາຍັງຄະນະພັກຄະນະນຳ ແລະ ຜູ້ບໍລິຫານ ມະຫາວິທະຍາໄລສະຫວັນນະເຂດນຳເອົາຫຼັກສູດຜູ້ປະກອບການເຂົ້າໃນການຮຽນ-ການສອນ ຝຶກຝົນນັກສຶກສາໃຫ້ມີຄວາມຮູ້ຄວາມສາມາດ ເພື່ອເປັນການສົ່ງເສີມການເປັນຜູ້ປະກອບການໃນມະຫາວິທະຍາໄລ.

**6. ຂໍ້ຂັດແຍ່ງ**

ພວກຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງພວກຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບ

**7. ເອກະສານອ້າງອີງ**


Ahmed, I., Nawaz, M. M., Ahmad, Z., Shaukat, M. Z., Usman, A., Rehman, W. U., & Ahmed, N. (2010). Determinants of Students' Entrepreneurial Career Intentions: Evidence from Business Graduates. *European Journal of Social Sciences*, *15*(2), 14-22.

Barrios, G. R., Rodriguez, J. R., Plaza, A. V., Zapata, C. V., & Zuluaga, M. G. (2021). Entrepreneurial intentions of university students in Colombia: Exploration based on the theory of planned behavior. *Journal of Education for Business*, *97*(3), 176-185.

Bounthongmi, S. (2019). *Study the Entrepreneurial Needs of Students at the Faculty of Business Administration, Savannakhet University.* Faculty of Business Administration Savannakhet University. [Unpublished bachelor's thesis] (Original language is in Lao)

Chounlamountry, L., & Liemchanly, V. (2022). *Entrepreneurship.* Faculty of Business Administration Savannakhet University

Fragoso, R., Rocha-Junior, W., & Xavier, A. (2020). Determinant factors of entrepreneurial intention among university students in Brazil and Portugal. *Journal of Small Business & Entrepreneurship*, *32*(1), 33–57. https://doi.org/10.1080/08276331.2018.1551459.

Gonzalez-serrano, M. H., Gonzalez-garcia, B. J. & Perez-campos, C. (2018). Entrepreneurial and intrapreneurial intentions of sports science students: what are their determinant variables ?. *Journal of Physical Education and Sport*, *18*(3), 1363-1372.

Jalil, Z., Rahim, N. A., Mohamad, N. A., Nordin, N, M., Koe, L. W. (2021). Determinants of Entrepreneurial Intention among University Students. *International Journal of Academic Research in Business and Social Sciences*, *11*(11), 735-754.

Khamyun, T. (2023). *A Study of Entreprenuerial Intentions among Pharmaceutical Students in Thailand.* Mahidol University. (Original language is in Thai)

Korsukthaweekhoon, Ch. (2022). *The Study of Entreprenuerial Motivation and Intention of Higher Education Students in Thailand.* Bangkok University. (Original language is in Thai)

Ohanu, I. B., & Ogbuanya, Ch. T. (2018). Determinant factors of entrepreneurship intentions of electronic technology education students in Nigerian universities. *Journal of Global Entrepreneurship Research*, *8*(36), 1-17.

Ounthaphanh, B., Hoongsengpha, S., & Sengchanh, S. (2023). Factors Affecting Entrepreneurial Intention of Students at The Northern Agriculture and Forestry College. *Souphanouvong University Journal Multidisciplinary Research and Development*, *9*(2), 130–139. Retrieved from https://www.su-journal.com/index.php/su/article/view/384

ÖzeltÜrkay, E. Y., Özekenci, E. K., & Yalcintas, D. (2019). Determining the Factors that Affect Entrepreneurial Intention: A research on University Students. *Journal of Youth Researches*, *7*(18), 41-58.

Pimpasone, V. (2022). *The Intention to be Sport Entrepreneur of Current Sport Science Student and/or Alumni Bangkok and Vicinity.* Mahidol University. (Original language is in Thai)

Pommi, Ch., & Naksai, S. (2020). Factors Influencing Entrepreneurial Intentions of Students in the Entrepreneurship Focused Programs at the University of Phayao. *Journal of Business Administration and Social Sciences Ramkhamhaeng University*, *3*(3), 65-80.

Poolsawat, P., & Potipiroon, W. (2019). The Influence of Factors Pertaing to Theory of Planned Behavior on Phuket Rajabhat University Undergraduate Students' Entreprenuerial Intentions. *Srinakharinwirot Business Journal*, *10*(2), 50-61.

Prajapati, B. (2019). Entrepreneurial Intention Among Business Students: The Effect of Entrepreneurship Education. *Westcliff International Journal of Applied Research*, *3*(1), 54-67.

Savanphatthana. (2025). *Project to strengthen technical units and the Small and Medium Enterprise Service Center*. Savanphatthana.

Shah, N., & Soomro, B. A. (2017). Investigating entrepreneurial intention among public sector university students of Pakistan. *Education + Training*, *59*(7), 841-855. https://doi.org/10.1108/ET-11-2016-0168

Souliyavong, P., & Silichamphone, S. (2021). *Study the Motivational Factors that Affect the Entrepreneurial Decision of University and College Students Majoring in Business Administration in Savannakhet Province*. Faculty of Business Administration Savannakhet University. [Unpublished bachelor's thesis] (Original language is in Lao)

Sornsermsombut, P. (2018). *Influence of Characteristics on Entreprenuerial Intention of Chiang Mai Rajabhat University Students*. Chiang Mai Rajabhat University. (Original language is in Thai)

Suikhamlar, K., Luangsena, P., Xaysana, L., Phommakhanh, K., Khammanivong, T., Xayyavong, P. (2022). *Self - Assessment Report (SAR)*. Savannakhet University. (Original language is in Lao)

Tanyong, P., Pongsittikanchana, T., Pongsittikanchana, Ch., & Nimitsadikul, P. (2021). Factors affecting entrepreneurial intentions of 4th Year Students, General Management, Nakhon Pathom Rajabhat University. *Journal of Management Science Nakhon Pathom Rajabhat University*, *8*(2), 322-333.

Vuong, B. N., Phuong, N. D., Huan, D. D., & Quan T. N. (2020). A Model of Factors Affecting Entrepreneurial Intention among Information Technology Students in Vietnam. *Journal of Asian Finance, Economics and Business*, *7*(8), 461-472.

Wathanakom, N., Khlaisang, J., & Songkram, N. (2020). The study of the causal relationship between innovativeness and entrepreneurial intention among undergraduate students. *Journal of Innovation and Entrepreneurship*, *9*(15), 1-13.

**ຕາຕະລາງທີ** 1: ບັນດາຕົວປ່ຽນ, ນິຍາມຕົວປ່ຽນ, ໜ່ວຍວັດ, ຄວາມສຳພັນ ແລະ ແຫຼ່ງທີ່ມາ

| **ຕົວປ່ຽນ** | **ນິຍາມຕົວປ່ຽນ** | **ຫົວໜ່ວຍ** | **ການພົວພັນ** | **ແຫຼ່ງຕົວປ່ຽນ** |
|---|---|---|---|---|
| ຕົວປ່ຽນຕາມ (Dependent Variable) (Y) | | | | |
| Want | ເລືອກເປັນຜູ້ປະກອບການ | 1 = ຕ້ອງການ<br>0 = ບໍ່ຕ້ອງການ | | |
| ຕົວປ່ຽນອິດສະຫຼະ (Independent Variable) | | | | |
| Gen | ເພດ | 1 = ຍິງ<br>0 = ຊາຍ | + | Shah & Soomro, (2017) |
| Age | ອາຍຸ | ປີ | + | Shah & Soomro, (2017) |
| Ethnics | ຊົນເຜົ່າ | 1 = ລາວ<br>0 = ອື່ນໆ | + | ຜູ້ສຶກສາ |
| Major | ສາຂາຮຽນ | 1 = ບໍລິຫານທຸລະກິດ<br>0 = ອື່ນໆ | + | ຜູ້ສຶກສາ |

| | | | | |
|---|---|---|---|---|
| Years | ປີຮຽນ | 1 = ປີ 4<br>0 = ອື່ນໆ | + | Ahmed et al., (2010) |
| Resid | ທີ່ຢູ່ອາໄສ | 1 = ນະຄອນໄກສອນ<br>0 = ອື່ນໆ | + | ຜູ້ສຶກສາ |
| Fa | ອາຊີບຂອງພໍ່ | 1 = ຄ້າຂາຍ<br>0 = ອື່ນໆ | + | Ohanu & Ogbuanya, (2018) |
| Mo | ອາຊີບຂອງແມ່ | 1 = ຄ້າຂາຍ<br>0 = ອື່ນໆ | + | Ohanu & Ogbuanya, (2018) |
| EA | ທັດສະນະຄະຕິ | ຄ່າສະເລ່ຍ | + | Wathanakom et al., (2020) |
| SN | ບັດທັດຖານທາງສັງຄົມ | ຄ່າສະເລ່ຍ | + | Pommi & Naksai, (2020) |
| PBC | ການຄວບຄຸມພຶດຕິກຳ | ຄ່າສະເລ່ຍ | + | Poolsawat & Potipiroon, (2019) |

**ຕາຕະລາງທີ 2**: ຜົນການວິເຄາະລະດັບຄວາມຕ້ອງການໃນການເປັນຜູ້ປະກອບການຂອງນັກສຶກສາພາຍໃນ ຄະນະບໍລິຫານທຸລະກິດ

| ລ/ດ | ລາຍການ | ($\bar{X}$) | SD | ລະດັບຄວາມສຳຄັນ |
|---|---|---|---|---|
| 1 | ດ້ານທັດສະນະຄະຕິໃນການເປັນຜູ້ປະກອບການ | 3.87 | 0.61 | ຫຼາຍ |
| 2 | ດ້ານບັນທັດຖານທາງດ້ານສັງຄົມ | 3.47 | 0.80 | ຫຼາຍ |
| 3 | ດ້ານຄວາມຮູ້ຄວາມສາມາດໃນການຄວບຄຸມພຶດຕິກຳ | 3.72 | 0.67 | ຫຼາຍ |

(ແຫຼ່ງທີ່ມາ: ໄດ້ຈາກການວິເຄາະແບບສອບຖາມໃນຄັ້ງວັນທີ 29 ພຶດສະພາ – 10 ມິຖຸນາ 2025)

**ຕາຕະລາງທີ 3**: ຜົນການວິເຄາະປັດໄຈທີ່ມີຜົນຕໍ່ການເລືອກເປັນຜູ້ປະກອບການຂອງນັກສຶກສາພາຍໃນ ຄະນະບໍລິຫານທຸລະກິດ

| | Loglikelihood | | | Marginal Effect | | |
|---|---|---|---|---|---|---|
| | Coefficient | z | P > z | dy/dx | z | P > z |
| _cons | -3.91 | 1.26 | -3.10 | | | |
| ເພດ (Gen) | 0.24$^{ns}$ | 1.34 | 0.18 | 0.09 $^{ns}$ | 1.31 | 0.19 |
| ອາຍຸ (Age) | 0.16*** | 2.85 | 0.00 | 0.06*** | 2.86 | 0.00 |
| ຊົນເຜົ່າ(Ethnics) | -0.36 $^{ns}$ | -1.51 | 0.13 | -0.12 $^{ns}$ | -1.65 | 0.10 |
| ສາຂາຮຽນ(Major) | -0.07 $^{ns}$ | -0.45 | 0.65 | -0.02 $^{ns}$ | -0.45 | 0.66 |
| ປີຮຽນ (Years) | -0.56*** | -2.90 | 0.00 | -0.21*** | -2.90 | 0.00 |
| ທີ່ຢູ່ອາໃສ (Resid) | -0.26 $^{ns}$ | -1.66 | 0.10 | -0.09* | -1.70 | 0.09 |
| ອາຊີບພໍ່ (Fa) | 0.24 $^{ns}$ | 1.27 | 0.21 | 0.09 $^{ns}$ | 1.30 | 0.19 |
| ອາຊີບແມ່ (Mo) | 0.28 $^{ns}$ | 1.58 | 0.11 | 0.10 $^{ns}$ | 1.60 | 0.11 |

| | | | | | | |
|---|---|---|---|---|---|---|
| ທັດສະນະຄະຕິໃນການເປັນຜູ້ປະກອບການ (EA) | 0.17 ns | 1.11 | 0.27 | 0.06 ns | 1.11 | 0.27 |
| ບັນທັດຖານທາງສັງຄົມ (SN) | -0.10 ns | -0.96 | 0.34 | -0.04 ns | -0.96 | 0.34 |
| ການຄວບຄຸມພຶດຕິກຳ (PBC) | 0.25* | 1.70 | 0.09 | 0.09* | 1.70 | 0.09 |
| ໝາຍເຫດ: * ມີຄວາມສຳຄັນທາງສະຖິຕິ 0.10, ** ມີຄວາມສຳຄັນທາງສະຖິຕິ 0.05, *** ມີຄວາມສຳພັນທາງສະຖິຕິ 0.01 ແລະ ns ບໍ່ມີຄວາມສຳຄັນທາງສະຖິຕິ | | | | | | |